ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 0405
ວັນທີ 19 APR 2018
ໂທລະສັບ 021 217770

ເລກທີ: 15 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 09 ເມສາ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 19-23/03/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໜຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,02% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສະຫະລັດອາເມລິກາ ອອກມາດີ ເປັນຕົ້ນຍອດສັ່ງຊື້ສິນຄ້າຄົງທົນຂອງເດືອນ 02/2018 ເພີ່ມຂຶ້ນ 3,1% ຈາກຫຼຸດລົງ 3,5% ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງມີຈຳນວນ 1,83 ລ້ານຄົນ ຂອງອາທິດທີ 10/03/2018 ຈາກ 1,89 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 12-16/03/2018 | ອາທິດນີ້ 19-23/03/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2325 | 1,2322 | 0,02% |
| ເຢນ/ໂດລາ | 105,69 | 104,86 | 0,79% |
| ບາດ/ໂດລາ | 31,18 | 31,22 | -0,13% |
| ເປໂຊ/ໂດລາ | 51,92 | 52,39 | -0,90% |
| ຣູເປັຍ/ໂດລາ | 13.745,00 | 13.780,00 | -0,25% |
| ໂດລາສິງກະໂປ/ໂດລາ | 1,3121 | 1,3155 | -0,26% |
| ຢວນ/ໂດລາ | 6,3222 | 6,3205 | 0,03% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 6,62% ຈາກ 60,60 ໂດລາ/ບາເຣວ ມາເປັນ 64,61 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ຫຼຸດລົງ 2,62 ລ້ານບາເຣວ ຂອງອາທິດທີ 16/03/2018;

- ສໍາລັບລາຄາຄໍາເພີ່ມຂຶ້ນ 1,70% ຈາກ 1.319,91 ໂດລາ/ອອນ ມາເປັນ 1.342,35 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ໄດ້ເຂົ້າຊື້ຄໍາເພີ່ມຂຶ້ນ ຈໍານວນ 10,62 ໂຕນ ຈາກທີ່ຖືຄອງ ຈໍານວນ 840,22 ໂຕນ ຂອງອາທິດທີ 16/03/2018 ມາເປັນ 850,84 ໂຕນ ຂອງອາທິດທີ 19/03/2018.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,05% ແຕ່ແຂງຄ່າຂຶ້ນ 0,10% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,02% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,16% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 16/03/2018 | | | ອາທິດນີ້ 23/03/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.324,99 | 8.324,49 | 8.310,43 | 8.305,47 | 8.328,07 | 8.314,50 | -0,01% | -0,04% | -0,05% | -0,05% | -0,01% | -0,02% |
| ບາດ | 266,66 | 267,86 | 267,54 | 266,21 | 267,67 | 267,27 | 0,17% | 0,07% | 0,10% | -4,20% | -4,08% | -4,16% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 1,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6,41%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,80% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,23%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (16-22/03/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 20,27 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 40,51 ລ້ານໂດລາ ແລະ ຂາຍໂດລາໄດ້ 20,24 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 449,61 ລ້ານບາດ (ໃນນີ້ຊື້ບາດໄດ້ 168,25 ລ້ານບາດ ແລະ ຂາຍບາດໄດ້ 617,86 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 16,68% ແລະ ເງິນບາດ ຫຼຸດລົງ 11,89%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈໍານວນ 7,80ລ້ານໂດລາ ແລະ ຂາຍເງິນບາດໃຫ້ທະນາຄານທຸລະກິດ ຈໍານວນ 95,04 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 5,26 ລ້ານໂດລາ ແລະ ເງິນບາດ ຈໍານວນ 91,28 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າ: ບໍ່ມີການຊື້-ຂາຍເງິນໂລດາ ແລະ ເງິນບາດ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 09-15/03/2018 | | ອາທິດນີ້ 16-22/03/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **40,57** | **259,77** | **40,51** | **168,25** | **-0,88%** | **-35,23%** |
| - ທ/ຄທຸລະກິດລັດ | 12,13 | 103,82 | 15,14 | 84,10 | 24,81% | -18,99% |
| - ທ/ຄທຸລະກິດອື່ນໆ | 28,44 | 154,02 | 25,37 | 84,15 | -11,73% | -46,04% |
| **2, ການຂາຍເງິນຕາຕ່າງປະເທດ** | **31,53** | **632,34** | **20,24** | **617,86** | **-36,83%** | **-2,31%** |
| - ທ/ຄທຸລະກິດລັດ | 13,43 | 146,98 | 11,79 | 219,43 | -12,21% | 49,29% |
| - ທ/ຄທຸລະກິດອື່ນໆ | 18,10 | 485,36 | 8,45 | 398,43 | -54,59% | -17,93% |
| **ຊື້-ຂາຍສຸດທິທທກ** | **9,04** | **-374,50** | **20,27** | **-449,61** | **129,56%** | **20,64%** |
| - ຜົດດ່ຽງຊື້-ຂາຍ | 22,28% | -145,25% | 50,04% | -267,23% | 131,60% | 86,26% |
| **- ມູນຄ່າການຊື້-ຂາຍ** | **72,10** | **890,18** | **60,75** | **786,11** | **-16,68%** | **-11,89%** |
| **3,ການຊື້-ຂາຍລະຫວ່າງທຫລກັບ ທທກ** | **-13,43** | **-51,00** | **-7,80** | **-95,04** | | |
| - ທຫລຊື້ຈາກທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 13,43 | 51,00 | 7,80 | 95,04 | | |
| **4,ຊື້-ຂາຍລະຫວ່າງທທກດ້ວຍກັນ** | **8,63** | **135,30** | **5,26** | **91,28** | | |
| **5,ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2018 ຄາດວ່າຈະຢູ່ໃນລະດັບ 1,28% (ຕົວເລກຄາດຄະເນ).

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 57,4% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 31,99 ລ້ານໂດລາສະຫະລັດທຽບເທົ່າ, ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 70,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 68,17 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 877 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 157 ສະບັບ ເທົ່າກັບ 21,81% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 525,76 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 230,23 ຕື້ກີບ ເທົ່າກັບ 77,90%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (16-22/03/2018) ມີທັງໝົດ 4,191 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3,968 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 27,56 ຕື້ກີບ ຈາກ 983,51 ຕື້ກີບ ມາເປັນ 1.011,07 ຕື້ກີບ ເທົ່າກັບ 2,80%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 223 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ ຈຳນວນ 208,31 ຕື້ກີບ ຈາກ 6,90 ຕື້ກີບ ມາເປັນ 215,21 ຕື້ກີບ ເທົ່າກັບ 3.018%;

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ,

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 902,21 ຈຸດ ຫຼຸດລົງ ຈາກ 902,38 ຈຸດ ຫຼື ເທົ່າກັບ 0,02% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 152.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 817,05 ຕື້ກີບ ຫຼຸດລົງ 51,48% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 20,20% ຂອງມູນຄ່າການຊື້-ຂາຍທັງໝົດ,

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX) (ຫົວໜ່ວຍມູນຄ່າ 1,000 ກີບ)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (ກີບ) | ລາຄາ ປ່ຽນແປງ (%) |
| BCEL | 181.400 | 1.034.005.000 | 5.800 | **124.200** | **709.610.000** | **5.800** | -31,53 | -31,37 | - | 0,00 |
| EDL-GEN | 148.600 | 630.140.000 | 4.300 | **22.800** | **97.465.000** | **4.300** | -84,66 | -84,53 | - | 0,00 |
| LWPC | 3.300 | 13.200.000 | 4.000 | - | - | **4.000** | -100,00 | -100,00 | - | 0,00 |
| PTL | 4.300 | 6.065.000 | 1.700 | **5.300** | **9.565.000** | **1.700** | 23,26 | 57,71 | - | 0,00 |
| SVN | - | - | 2.900 | - | - | **2.900** | - | - | - | 0,00 |
| PCD | - | - | 1.400 | **300** | **415.000** | **1.400** | - | - | - | 0,00 |
| LCC | 200 | 515.000 | 2.600 | - | - | **2.550** | -100,00 | -100,00 | -50 | -1,92 |
| ທັງໝົດ | 337.800 | 1.683.925.000 | | **152.600** | **817.055.000** | | -54,83 | -51,48 | | |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມຜ່ານຮ່າງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ສະບັບປັບປຸງ ທີ່ (ທຫລ), ❷ ກອງປະຊຸມປຶກສາຫາລືວຽກງານອວ່າຍໜີ້ 3 ແຈ ທີ່ (ທຫລ), ❸ ກອງປະຊຸມຄະນະຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❹ ກອງປະຊຸມສະພາບໍລິຫານ ສະຖາບັນການທະນາຄານ ທີ່ (ສທຄ), ❺ ກອງປະຊຸມຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກກົມກວດກາພາຍໃນ, ໜ່ວຍພັກ ສກໜ, ໜ່ວຍພັກ ໂຮງພິມ ແລະ ໜ່ວຍພັກກົມບໍລິການທະນາຄານ ແລະ ❻ ພິທີຖະແຫຼງຂ່າວການຮ່ວມມື ລະຫວ່າງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານທະນາຊາດກ່ຽວກັບການພັດທະນາລະບົບຊຳລະສະສາງລະຫວ່າງ ລາວ-ໄທ ຜ່ານລະບົບ QR Promptpay ທີ່ (ປະເທດໄທ);
- ສຳເລັດການຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການຄື: ❶ ສະພາທຸລະກິດອາເມລິກາອາຊຽນ (US-ASEAN Bussiness Council) ແລະ ❷ ທີ່ປຶກສາວຽກງານການເງິນ ແລະ ເປັນຜູ້ຕ່າງໜ້າຂອງທະນາຄານກາງຝຣັ່ງ ປະຈຳພາກພື້ນອາຊີຕາເວັນອອກສຽງໃຕ້.
- ທ່ານ ຜູ້ວ່າການພ້ອມດ້ວຍຄະນະ ເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ແຂວງຫົວພັນ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ: ➊ ກອງປະຊຸມເປີດກວ້າງຄະນະພັກ ທຫລ ທີ່ (ສທຄ), ➋ ກອງປະຊຸມເປີດກວ້າງຜ່ານຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ທີ່ (ສທຄ), ➌ ກອງປະຊຸມສະພາບໍລິຫານ ທະນາຄານນະໂຍບາຍ ທີ່ (ທນບ), ➍ ກອງປະຊຸມຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງໜ່ວຍພັກ ສຄຄຊ ທີ່ (ສຄຄຊ) ແລະ ➎ ກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ ແຕ່ປີ 2017-2025.

ຫົວໜ້າຫ້ອງການ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ